**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ກະຊວງ ພະລັງງານ ແລະ ບໍ່ແຮ່

ຫ້ອງການກະຊວງ

ເລກທີ.....0137...../ພບ.ຫກ

ນະຄອນຫຼວງວຽງຈັນ ວັນທີ.....17 JAN 2022.....

# ໜັງສືແຈ້ງເຊີນປະມູນ

**ເຖິງ** : ບັນດາບໍລິສັດ ຜູ້ສະໜອງເຄື່ອງໃຊ້ຫ້ອງການ, ແອເຢັນ ແລະ ສ້ອມແປງວັດຖຸອຸປະກອນ.

**ເລື່ອງ** : ເຂົ້າຮ່ວມປະມູນ ເພື່ອສະໜອງເຄື່ອງໃຊ້ຫ້ອງການ ແລະ ແອເຢັນ ໃຫ້ກະຊວງພະລັງງານ ແລະບໍ່ແຮ່.

- ອີງຕາມກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017.
- ອີງຕາມຂໍ້ຕົກລົງຂອງທ່ານລັດຖະມົນຕີ ວ່າດ້ວຍການເຄື່ອນໄຫວຂອງຫ້ອງການກະຊວງ ພະລັງງານ ແລະ ບໍ່ແຮ່ ສະບັບເລກທີ 0157/ນຍ, ລົງວັນທີ 29/01/2018.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະມູນຈັດຊື້-ຈັດຈ້າງ ສະບັບເລກທີ 1287/ພບ, ລົງວັນທີ 06 ຕຸລາ 2021.

ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ຂໍແຈ້ງມາຍັງບັນດາ ບໍລິສັດ/ວິສາຫະກິດ ທີ່ມີຄວາມສົນໃຈ ເຂົ້າຍື່ນຊອງປະມູນ ເພື່ອສະໜອງເຄື່ອງໃຊ້ຫ້ອງການ, ແອເຢັນ ແລະ ສ້ອມແປງວັດຖຸອຸປະກອນ. ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່. ສາມາດຕິດຕໍ່ ຮັບຊອງປະມູນ ຕາມວັນ ແລະ ເວລາລັດຖະການ (ວັນຈັນ-ວັນສຸກ ເວລາ 8:30 ຫາ 16:00 ນາທີ).

1. ເລີ່ມຂາຍຊອງປະມູນ ວັນທີ 18 ມັງກອນ 2022 ຫາ ວັນທີ 21 ກຸມພາ 2022, (ຜູ້ທີ່ມີຈຸດປະສົງຈະເຂົ້າມາສະໜອງ ວັດຖຸອຸປະກອນດັ່ງກ່າວ ຕ້ອງໄດ້ເສຍຄ່າເອກະສານປະມູນເປັນເງິນສົດຈຳນວນ 500.000 ກີບ/ຊອງ).
2. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 22 ກຸມພາ 2022 ຢູ່ທີ່ ຫ້ອງການກະຊວງພະລັງງານ ແລະ ບໍ່ແຮ່ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງບໍລິສັດ/ວິສາຫະກິດ ທີ່ໄດ້ຍື່ນຊອງປະມູນ, ຖ້າສົ່ງກາຍກຳນົດເວລາ ຈະບໍ່ຮັບພິຈາລະນາ.
3. ສຳລັບເງື່ອນໄຂ, ຄຳແນະນຳ ແລະ ແບບຟອມການປະມູນ ໄດ້ຄັດຕິດຊ້ອນທ້າຍມາພ້ອມນີ້.
4. ບໍລິສັດ ຕ້ອງປະກອບເອກະສານຕາມແບບຟອມແນະນຳ ແລະ ເງື່ອນໄຂ ທີ່ກຳນົດໄວ້ ໃຫ້ຄົບຖ້ວນ.

**<u>ໝາຍເຫດ:</u>** ເວລາມາພົວພັນຊື້ຊອງ ແລະ ຍື່ນຊອງປະມູນແຕ່ງການສຸພາບ (ເພດຍິງນຸ່ງ ສິ້ນລາວ, ເພດຊາຍນຸ່ງໂສ້ງຂາຍາວ ແລະ ເສື້ອ ສຸພາບ)

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ພິຈາລະນາຕາມສົມຄວນດ້ວຍ.

ດ້ວຍຄວາມນັບຖື,

**ຫົວໜ້າຫ້ອງການ**

ກອນທອງ ພູນິດົມ

**<u>ພົວພັນ:</u>** ນາງ ຈິນຕະນາວັນ ຊາພັກດີ 020 22214822

ທ້າວ ພູວຽງ ຖາວີວອນ 020 54565962